ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ: 0079 /ກຄພນ.

ນະຄອນຫຼວງວຽງຈັນ, ວັນທີ: 17 ມັງກອນ 2017.

ເຖິງ : ທ່ານຜູ້ອຳນວຍການ ບໍລິສັດ ABC

ເລື່ອງ : ຢັ້ງຢືນແຜນຈຳໜ່າຍອາຍແກັສຫຸງຕົ້ມ ປະຈຳປີ 2017.

- ອີງຕາມ ຂໍ້ກຳນົດ ສະບັບເລກທີ 0756/ກຄ.ພນ, ລົງວັນທີ 20/6/2001 ວ່າດ້ວຍການຄຸ້ມຄອງທຸລະກິດນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມ.
- ອີງຕາມ ໃບທະບຽນວິສາຫະກິດ ສະບັບເລກທີ 342/ຈທວ, ລົງວັນທີ 05/9/2014.
- ອີງຕາມ ໃບສະເໜີສະບັບເລກທີ 3688, ລົງວັນທີ 29/12/2016 ຂອງ ບໍລິສັດ ABC

ເພື່ອເຮັດໃຫ້ການຄຸ້ມຄອງວຽກງານທຸລະກິດອາຍແກັສຫຸງຕົ້ມ ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນບົນພື້ນຖານລະບຽບການ ແລະ ຄວາມສາມາດຮອງຮັບດ້ານພື້ນຖານໂຄງລ່າງ ຂອງວິສາຫະກິດຈຳໜ່າຍອາຍແກັສຫຸງຕົ້ມ ຢູ່ ສປປ ລາວ.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ ຢັ້ງຢືນແຜນຈຳໜ່າຍອາຍແກັສຫຸງຕົ້ມປະຈຳປີ 2017 ຂອງ ບໍລິສັດ ABC , ຊຶ່ງມີລາຍລະອຽດດັ່ງນີ້:

## I. ພື້ນຖານໂຄງລ່າງ ແລະ ແຜນການຈຳໜ່າຍອາຍແກັສຫຸງຕົ້ມປະຈຳປີ 2017:

| ລ/ດ | ລາຍການ | ຈຳນວນ (ແຫ່ງ/ຄັນ) | ຂະໜາດບັນຈຸ (ກລ) | ແຜນການຈຳໜ່າຍ (ກລ) | ໝາຍເຫດ |
|---|---|---|---|---|---|
| I | **ໂຮງ (ສາງ) ບັນຈຸ** | | | | |
| 1 | ນະຄອນຫຼວງວຽງຈັນ | 1 | 42,000 | | |
| II | **ຮ້ານ ຈຳໜ່າຍ** | 1 | | | |
| 1 | ນະຄອນຫຼວງວຽງຈັນ | 1 | | 3,120,000 | |
| 2 | ຈຳປາສັກ | 1 | | 900,000 | |
| III | **ພາຫະນະຂົນສົ່ງ** | 2 | | | |
| IV | **ອື່ນໆ** | 0 | | | |
| | **ລວມ** | | | **4,020,000** | |

## II. ສິດ ແລະ ພັນທະທີ່ຕ້ອງປະຕິບັດ :

ນອກຈາກປະຕິບັດຕາມລະບຽບການຂໍ້ກຳນົດ ສະບັບເລກທີ 0756/ກຄ.ພນ, ລົງວັນທີ 20/6/2001 ວ່າດ້ວຍການຄຸ້ມຄອງທຸລະກິດນຳເຂົ້າ ແລະ ຈຳໜ່າຍອາຍແກັສຫຸງຕົ້ມແລ້ວ, ບໍລິສັດ ABC ຕ້ອງປະຕິບັດພັນທະຕື່ມດັ່ງນີ້:

- ຕິດສະຫຼາກເປັນພາສາລາວ, ປ້າຍລາຄາເປັນເງິນກີບ ແລະ ເຄື່ອງໝາຍຂອງບໍລິສັດ ໃສ່ຂ້າງນອກຂອງກະປ໋ອງ, ຖັງແກ໊ສຫຸງຕົ້ມແຕ່ລະປະເພດ, ໂຮງ(ສາງ)ບັນຈຸ, ໜ້າຮ້ານຈຳໜ່າຍ ແລະ ຮ້ານຕົວແທນຈຳໜ່າຍ ບ່ອນທີ່ສາມາດເບິ່ງເຫັນໄດ້ສະດວກສະບາຍ.

- ນ້ຳໜັກກະປ໋ອງ, ຖັງບັນຈຸອາຍແກ໊ສ ແລະ ອາຍແກ໊ສຫຸງຕົ້ມ ທີ່ບັນຈຸໃນກະປ໋ອງ, ຖັງບັນຈຸອາຍແກ໊ສ ຕ້ອງໃຫ້ຖືກຕ້ອງຕາມມາດຕະຖານຂະແໜງການກ່ຽວຂ້ອງວາງອອກຢ່າງເຂັ້ມງວດ.

- ອາຍແກ໊ສຫຸງຕົ້ມ ທີ່ນຳເຂົ້າ ກ່ອນຈະຈຳໜ່າຍ ຕ້ອງບັນຈຸລົງສາງ ແລະ ນຳເຂົ້າຜ່ານດ່ານທີ່ໄດ້ຮັບອະນຸຍາດ.

- ສະຫລຸບ, ລາຍງານພື້ນຖານໂຄງລ່າງ, ຕົວເລກຈຳໜ່າຍອາຍແກ໊ສຫຸງຕົ້ມ ແລະ ລາຄາ CIF ໃຫ້ກົມການຄ້າພາຍໃນ, ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ ຊາບເປັນປະຈຳທຸກເດືອນ.

- ໃບຢັ້ງຢືນແຜນຈຳໜ່າຍອາຍແກ໊ສຫຸງຕົ້ມ ສະບັບນີ້ ເລີ່ມຈັດຕັ້ງປະຕິບັດຕັ້ງແຕ່ ວັນທີ 1/1/2017 ເຖິງ ວັນທີ 31/12/2017.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ບຸນທຽນ ແກ້ວສີພາ

<u>ບ່ອນສົ່ງ</u> :

- ກົມການນຳເຂົ້າ ແລະ ສົ່ງອອກ 01 ສະບັບ (ເພື່ອຊາບ ແລະ ເປັນບ່ອນອີງ);
- ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງ (ເພື່ອຕິດຕາມ);
- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ (ເພື່ອຕິດຕາມ);
- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກ໊ສ 01 ສະບັບ (ເພື່ອເປັນຂໍ້ມູນ);
- ເກັບມ້ຽນ 01 ສະບັບ.